# ປົດຂ່າວ

## ທຄຕລ ສາຂາຄຳມ່ວນ ເປີດບູ໋ດບໍລິການ ສົ່ງເສີມການນຳໃຊ້ OnePay ໃນ ງານບຸນນະມັດສະການພຣະທາດສີໂຄດຕະບອງ

**ແຂວງ ຄຳມ່ວນ, ວັນທີ: 25-31/01/2018**

ໃນວັນທີ 25-31/01/2018, ຢູ່ທີ່ ເດີ່ນງານບຸນນະມັດສະການພຣະທາດສີໂຄດຕະບອງ ທຄຕລ ສາຂາຄຳມ່ວນ ໄດ້ ເປີດບູ໋ດໃຫ້ບໍລິການ ສົ່ງເສີມການນຳໃຊ້ OnePay ຫຼື ການຊຳລະຄ່າສິນຄ້າດ້ວຍການສະແກນ QR Code ຢ່າງຍິ່ງໃຫຍ່ ໃນງານ ເປີດປີທ່ອງທ່ຽວລາວ 2018. ພາຍໃນງານມີຮ້ານຄ້າຈຳນວນຫລາຍຮ້ານ ໄດ້ໃຫ້ຄວາມສົນໃຈ ແລະ ເຂົ້າຮ່ວມບໍລິການຮັບຊຳລະ ສິນຄ້າແບບໃໝ່ ຊື້ງ່າຍ-ຈ່າຍສະດວກ ຜ່ານ OnePay, ພ້ອມດຽວກັນນັ້ນ ກໍ່ໄດ້ຮັບກຽດທົດລອງການນຳໃຊ້ ໂດຍການນຳຂັ້ນ ສູງ ແລະ ແຂກທີ່ມີກຽດທີ່ມາຮ່ວມໃນງານຫຼາຍທ່ານ ລວມທັງສື່ມວນຊົນ ແລະ ປະຊາຊົນທົ່ວໄປທີ່ມາຮ່ວມງານຄັ້ງນີ້.




OnePay ເປັນຜະລິດຕະພັນໃໝ່ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ເຊິ່ງເປັນ Function ໜຶ່ງ ໃນ ແອັບຂອງ BCEL One, ນຳໃຊ້ເພື່ອຊຳລະຄ່າສິນຄ້າ ໂດຍການສະແກນ QR Code ສຳລັບຮ້ານຄ້າທີ່ລົງທະບຽນນຳໃຊ້ ແລະ ລູກຄ້າຜູ້ທີ່ນຳໃຊ້ BCEL One ໃຫ້ມີຄວາມສະດວກສະບາຍທັງຜູ້ຊື້ ແລະ ຜູ້ຂາຍ, ທັງເປັນນະວັດຕະກຳການຊຳລະເງິນຮູບແບບ ໃໝ່ ທີ່ມີຄວາມທັນສະໄໝ, ມີຄວາມປອດໄພ, ກວດສອບຕິດຕາມໄດ້ງ່າຍ; ພ້ອມທັງເປັນການສົ່ງເສີມນະໂຍບາຍຂອງພາກລັດ ໃນການຫຼຸດຜ່ອນການນຳໃຊ້ເງິນສົດ ໃນການຊຳລະສະສາງຄ່າສິນຄ້າ ຫັນໄປສູ່ການຊຳຜ່ານລະບົບເອເລັກໂທນິກທີ່ທັນສະໄໝ.

ນອກຈາກນັ້ນ, ພາຍໃນບູ່ດຂອງ ທຄຕລ ຍັງໄດ້ມີການບໍລິການອື່ນໆ ເປັນຕົ້ນແມ່ນການຮັບຊໍາລະຄ່າທໍານຽມທາງ, ລົງທະບຽນສະໝັກນໍາໃຊ້ BCEL One, ອອກບັດ VISA ແລະ ເປີດບັນຊີໃໝ່ ເພື່ອໃຫ້ບໍລິການປະຊາຊົນທີ່ມາຮ່ວມໃນງານ.









ຕະບອງ ຄັ້ງນີ້ ໄດ້ຮັບການຕອບຮັບຈາກສັງຄົມເປັນຢ່າງດີ. ເຫັນໄດ້ຈາກ ຮ້ານຄ້າທັງລາຍຍ່ອຍ ແລະ ລາຍໃຫຍ່ ຈໍານວນຫຼວງຫຼາຍຮ້ານ ໃຫ້ຄວາມສົນໃຈເຂົ້າຮ່ວມການບໍລິການຮັບຊໍາລະສິນຄ້າຜ່ານ OnePay ເຊິ່ງເປັນນິມິດໝາຍທີ່ດີ ໃນການສືບຕໍ່ຂະຫຍາຍໄປຍັງຮ້ານຄ້າແຫ່ງອື່ນພາຍໃນແຂວງ, ກໍ່ຄືໃນຂອບເຂດທົ່ວປະເທດ.

**ສອບຖາມຂໍ້ມູນເພີ່ມເຕີມໂທ:** **051 250747, 021 213200 ຕໍ່ 404/407**

**Facebook Fan Page :** **BCEL Bank**

**Website:** **www.bcel.com.la**